# ກອງທຶນຫລຸດຜ່ອນຄວາມທຸກຍາກ
# ໜ້າທີ່ຮັບຜິດຊອບ

| | |
|---|---|
| ຕໍາແໜ່ງ: | ວິສະວະກອນ ຂັ້ນເມືອງ |
| ຈໍານວນຕໍາແໜ່ງ: | ຫ້ອງການລະ 1 ຄົນ |
| ລາຍງານໂດຍກົງຫາ: | ຫົວໜ້າທີມຂັ້ນເມືອງ ແລະ ວິສະວະກອນຂັ້ນແຂວງ |
| ພົວພັນວຽກໃກ້ຊິດກັບ: | ທີມງານ ທລຍ ເມືອງ, ວິສະວະກອນ ຂັ້ນແຂວງ |
| ໜ້າທີ່ຮັບຜິດຊອບທົ່ວໄປ: | ຊ່ວຍເຫລືອ ແລະ ໃຫ້ຄໍາແນະນໍາທາງດ້ານວຽກງານວິສະວະກໍາ -ການກໍ່ສ້າງໂຄງການຍ່ອຍ ໃຫ້ແກ່ຊຸມຊົນ |
| ບ່ອນປະຈໍາການ: | ຫ້ອງການ ທລຍ ແຂວງ ຢູ່ແຕ່ລະແຂວງເປົ້າໝາຍ |
| ປະເພດສັນຍາ: | ເປັນລາຍປີ ໂດຍອີງຕາມຜົນການປະຕິບັດວຽກຕົວຈິງ ໃນແຕ່ລະໄລຍະ. ມີໄລຍະທົດສອບວຽກ 3-6 ເດືອນ ໃນເວລາເຂົ້າເຮັດວຽກໃໝ່. |

**ໜ້າທີ່ ແລະ ຄວາມຮັບຜິດຊອບຫລັກ:**

- ໃຫ້ການຊ່ວຍເຫຼືອດ້ານວິຊາການ ແລະ ວິສະວະກໍາໃນການກະກຽມ ແລະ ຈັດຕັ້ງປະຕິບັດກິດຈະກໍາ ຂອງກອງທຶນ.
- ພົວພັນ ແລະ ເຮັດວຽກຢ່າງໃກ້ຊິດກັບວິສະວະກອນຂັ້ນແຂວງ ລວມໄປເຖິງສະມາຊິກໃນພະແນກວິສະວະກໍາຂັ້ນສູນກາງ ເພື່ອພັດທະນາຮູບແບບ ແລະ ຫຼັກການດ້ານເຕັກນິກ ຂອງໂຄງການກໍ່ສ້າງ ພາຍໃຕ້ຂອບວຽກຂອງ ທລຍ.
- ໂດຍການສະໜັບສະໜູນຈາກ ທລຍ ແຂວງ, ຕ້ອງສະໜອງຂໍ້ມູນດ້ານວິຊາການ ແລະ ຮ່າງບົດລາຍງານ ເພື່ອນໍາສະເໜີຕໍ່ວິສະວະກອນ ຢູ່ຂັ້ນແຂວງ.
- ພົວພັນ ແລະ ປະສານສົມທົບດ້ານເຕັກນິກ/ວິສະວະກໍາ ກັບທຸກໆຂະແໜງການຂອງລັດ ແລະ ຂອງອົງການຈັດຕັ້ງ ຕ່າງໆທີ່ກ່ຽວຂ້ອງ ໂດຍສະເພາະຢູ່ຂັ້ນເມືອງ
- ລົງຕິດຕາມກວດກາເບິ່ງການຈັດຕັ້ງປະຕິບັດກິດຈະກໍາຍ່ອຍໆຕ່າງໆ - ໂຄງການກໍ່ສ້າງ ຂອງກອງທຶນ ພ້ອມທັງໃຫ້ຄໍາແນະນໍາ, ແກ້ໄຂໜ້າວຽກ ຫຼື ບັນຫາຕ່າງໆທີ່ເຫັນວ່າຈໍາເປັນ ແກ່ຊຸມຊົນ ແລະ ຜູ້ຮັບເໝົາ
- ເຂົ້າຮ່ວມໃນການສໍາຫຼວດ, ເກັບກໍາ ແລະ ວິໄຈຂໍ້ມູນຕ່າງໆ ທາງດ້ານວິສະວະກໍາຂອງໂຄງການກໍ່ສ້າງ ທີ່ສະເໜີ.
- ຊີ້ນໍາ, ຕິດຕາມ ແລະ ກວດກາກິດຈະກໍາໂຄງການກໍ່ສ້າງ ຢູ່ຂັ້ນກຸ່ມບ້ານ ຢ່າງໃກ້ຊິດ.
- ແນະນໍາ ແລະ ຊ່ວຍແກ້ໄຂບັນຫາທີ່ກ່ຽວຂ້ອງທາງດ້ານເຕັກນິກ/ວິສະວະກໍາ ໃຫ້ແກ່ກຸ່ມບ້ານ

- ຝຶກອົບຮົມກ່ຽວກັບວິທີຄຸ້ມຄອງນຳໃຊ້ ແລະ ບົວລະບັດຮັກສາໂຄງການກໍ່ສ້າງຕ່າງໆ ໃຫ້ແກ່ຊຸມຊົນ ແລະ ພາກສ່ວນຕ່າງໆ ທີ່ກ່ຽວຂ້ອງ
- ປະຕິບັດໜ້າວຽກອື່ນໆ ຕາມຄວາມຮຽກຮ້ອງຕ້ອງການ ແລະ ການມອບໝາຍຂອງການຈັດຕັ້ງ.

**ຄຸນວຸດທິ ແລະ ປະສົບການ**

- ຮຽນຈົບວິຊາສະເພາະດ້ານວິສະວະກຳກໍ່ສ້າງ ຫລື ອອກແບບ.
- ມີຄວາມຮູ້ ຫລື ປະສົບການໃນການຕິດຕາມ ແລະ ກວດກາໂຄງການກໍ່ສ້າງໂຄງລ່າງພື້ນຖານຢູ່ເຂດຊົນນະບົດ ຢ່າງໜ້ອຍ 2 ປີ
- ມີປະສົບການ ຫລື ມີທັກສະໃນການພົວພັນ ແລະ ປະສານງານກັບຊຸມຊົນ, ອຳນາດການປົກຄອງ ທຸກລະດັບໄດ້ດີ
- ສາມາດນຳໃຊ້ຄອມພິວເຕີເຂົ້າໃນວຽກງານຕ່າງໆ Ms. Office (word, excel)
- ມີຄວາມຮູ້ ຫລື ປະສົບການໃນການເປັນຄູຝຶກ